

# ເອກະລັກຂອງຊົນເຜົ່າ

# ປະໂກະ



2015

ຈັດພິມໂດຍ: ກົມຊົນເຜົ່າ ສູນກາງແນວລາວສ້າງຊາດ

ຮ່ວມກັບ: CLICK

ສະໜັບສະໜູນໂດຍ: SDC

Schweizerische Eidgenossenschaft
Confe’de’ration suisse
Confederazione Svizzera
Confederaziun svizra

**Embassy of Switzerland**

**Swiss Agency for Development and Cooperation SDC**

# ຄຳເຫັນ
# ຂອງຫົວໜ້າກົມຊົນເຜົ່າ ສູນກາງແນວລາວສ້າງຊາດ

ປະເທດລາວ ເປັນປະເທດທີ່ນ້ອຍ, ເນື້ອທີ່ບໍ່ກວ້າງຂວາງແຕ່ກໍອຸດົມສົມບູນໄປດ້ວຍຊັບພະຍາກອນທຳມະຊາດ ແລະ ວັດທະນະທຳອັນດີງາມໂດຍສະເພາະແມ່ນຫຼາກຫຼາຍສີສັນຂອງບັນດາຊົນເຜົ່າ. ຊຶ່ງເປັນສິ່ງເອກອ້າງທະນົງໃຈ ຂອງປວງຊົນລາວ ແລະ ເປັນທີ່ດຶງດູດເອົານັກທ່ອງທ່ຽວໃນທົ່ວໂລກຫຼາຍລ້ານຄົນເຂົ້າມາຮຽນຮູ້ວັດທະນະທຳດັ່ງກ່າວ ໃນແຕ່ລະປີ. ດັ່ງທີ່, ທ່ານ ປະທານ ໄກສອນ ພົມວິຫານ, ຜູ້ນຳທີ່ເຄົາລົບຮັກຂອງປວງຊົນລາວທັງຊາດໄດ້ໃຫ້ຄຳເຫັນວ່າ: “ປະເທດລາວເຮົາມີວົງຄະນາຍາດລວມອັນປະກອບດ້ວຍຫຼາຍຊົນເຜົ່າ”. ໃນຫຼາຍຊົນເຜົ່າກໍມີຫຼາຍດ້ານທີ່ດີປຽບເໝືອນດັ່ງດອກໄມ້ນາໆພັນທີ່ພວມເບັ່ງບານໃນສວນອຸທະຍານອັນພາໃຫ້ມີຫຼາຍຮູບຫຼາຍສີສັນ ແລະ ສົ່ງກິ່ນຫອມຫວນ.

ສະນັ້ນ, ເພື່ອເປັນການສົ່ງເສີມວັດທະນະທຳອັນດີງາມຂອງບັນດາຊົນເຜົ່າໃນ ສປປ ລາວ ກົມຊົນເຜົ່າ ສູນກາງແນວລາວສ້າງຊາດຮ່ວມກັບ ວິສະຫະກິດ CLICK I4 Dev ໂດຍ: ສະໜັບສະໜູນຈາກສະຖານທູດ ສະວິດສະແລັນ (SDC), ຈິ່ງໄດ້ຮຽບຮຽງ ແລະ ຈັດພິມປຶ້ມກ່ຽວກັບຊົນເຜົ່າ ປະໂກະ ຄືນໃໝ່ໂດຍແຍກຈາກປຶ້ມບັນດາຊົນເຜົ່າຢູ່ ສປປ ລາວ ໃນເມື່ອກ່ອນ. ເພື່ອເຜີຍແຜ່ໃຫ້ສັງຄົມໄດ້ເຂົ້າໃຈຮີດຄອງປະເພນີອັນເປັນເອກະລັກສະເພາະຂອງຊົນເຜົ່າປະໂກະ ໃນ ສປປ ລາວ. ປຶ້ມນ້ອຍຫົວນີ້ແມ່ນບັນລະຍາຍກ່ຽວກັບເອກະລັກສະເພາະຂອງຊົນເຜົ່າ ປະໂກະ ຊຶ່ງປະກອບດ້ວຍ: ຊື່ເອີ້ນ, ການຂະຫຍາຍຕົວຂອງພົນລະເມືອງ, ການນຸ່ງຫົ່ມ, ການກິນຢູ່, ການຕັ້ງພູມລຳເນົາ ແລະ ບາງປະເພນີ.

ແຕ່ເນື່ອງຈາກ, ການຮຽບຮຽງເນື້ອໃນຄັ້ງນີ້ແມ່ນບົນພື້ນຖານຂໍ້ມູນທີ່ມີແລ້ວ, ສະນັ້ນ, ຈຶ່ງມີຂໍ້ຈຳກັດ, ຄວາມຊັດເຈນ, ຄວາມອຸດົມສົມບູນດ້ານຂໍ້ມູນພໍສົມຄວນ, ຢ່າງໃດກໍຕາມ, ຫວັງຢ່າງຍິ່ງວ່າປຶ້ມດັ່ງກ່າວຈະເປັນປະໂຫຍດໃຫ້ແກ່ສັງຄົມໃນການເຂົ້າໃຈໄດ້ເອກະລັກອັນສະເພາະຂອງຊົນເຜົ່າ ປະໂກະ ໃນ ສປປ ລາວ ບໍ່ຫຼາຍກໍໜ້ອຍ ແລະ ຈະເປັນພື້ນຖານຕື່ມກ່ຽວກັບການຄົ້ນຄວ້າຊົນເຜົ່າໃນ ສປປລາວ ແລະ ນຳເອົາຂໍ້ມູນໃໝ່ມາປັບປຸງໃຫ້ມີເນື້ອໃນອຸດົມສົມບູນເພີ່ມຂຶ້ນໃນອະນາຄົດ

ທ່ານສາມາດດາວໂຫຼດເອົາເນື້ອໃນປຶ້ມ ດັ່ງກ່າວໄດ້ທີ່ເວັບໄຊ : www.doe-lfnc.org ຫຼື ຕິດຕໍ່ຂໍ້ມູນເພີ່ມເຕີມມາຍັງ ກົມຊົນເຜົ່າ ສູນກາງແນວລາວສ້າງຊາດ

ທີ່ເບີໂທ: 021 218965, Email : ethnic123lfnc@gmail.com

ນະຄອນຫຼວງວຽງຈັນ, ວັນທີ....................2015

**ສູນກາງແນວລາວສ້າງຊາດ**
**ຫົວໜ້າກົມຊົນເຜົ່າ**

# ແຜນທີ່ການແຈກ ຢາຍພົນລະເມືອງ

ປັດຈຸບັນຊົນເຜົ່າ ປະໂກະ ກໍຍັງຄົງ ດຳລົງຊີວິດ ແລະ ຕັ້ງຖິ່ນຖານພູມລຳເນົາ ເປັນສ່ວນຫຼາຍຢູ່ເມືອງ ສະໝ້ວຍ ແລະ ເມືອງ ຕະໂອ້ຍ ແຂວງ ສາລະວັນ ເໝືອນເດີມ. ນອກຈາກນີ້ແລ້ວຊົນເຜົ່າ ປະໂກະ ຍັງມີຢູ່ປະເທດຫວຽດນາມ ອີກດ້ວຍ.

ຊົນເຜົ່າ ປະໂກະ ຢູ່ລາວມີປະຊາກອນ ທັງໝົດ 16.750 ຄົນ, ຍິງ 8.508 ຄົນ. ເທົ່າກັບ 0,3% ຕາມການສຳຫຼວດພົນລະເມືອງທົ່ວປະເທດ ຄັ້ງທີ III ປີ 2005.




● ຊົນເຜົ່າ ປະໂກະ ທີ່ແຈກຢາຍຢູ່ແຕ່ລະບ່ອນ

- ແຂວງ ສາລະວັນ: ເມືອງ ສະໝ້ວຍ ແລະ ເມືອງ ຕະໂອ້ຍ

# ປະຫວັດຄວາມເປັນມາ ແລະ ຊື່ເອີ້ນ

ສຳລັບຊົນເຜົ່າ ປະໂກະ ຢູ່ປະເທດລາວເຮົາໄດ້ອົບພະຍົບ ແລະ ເຄື່ອນຍ້າຍມາຈາກ ປະເທດຫວຽດນາມ ໂດຍສະເພາະແມ່ນເມືອງ ອາເລືອຍ ແຂວງ ເທື່ອທຽນເຫວ້ ແລະ ເມືອງ ຮ້ຽງຮວາ ແຂວງ ກວາງຈິ ຜ່ານສາຍພູຫຼວງແລ້ວມາຕັ້ງຖິ່ນຖານພູມລຳເນົາຢູ່ເຂດອາຕຸດ, ອາແດງ ແລະ ກົວລໍ ເມືອງ ສະໝ້ວຍ ແລະ ເຂດຕະຮວກ, ປະງານ, ເມືອງ ຕະໂອ້ຍ ແຂວງ ສາລະວັນ.

ຊົນເຜົ່ານີ້ເອີ້ນຕົນເອງວ່າ: “ປະໂກະ”, ຊື່ທີ່ຊົນເຜົ່າອື່ນເອີ້ນໃຫ້ເຂົາເຈົ້າ, ຊື່ທີ່ມັກ ແລະ ຊື່ທີ່ໃຊ້ທາງລັດຖະການກໍແມ່ນຊົນເຜົ່າ “ປະໂກະ”.



ພາບໂດຍ: ກົມຊົນເຜົ່າ

ສຳລັບຄວາມໝາຍຂອງຄຳທີ່ເອີ້ນວ່າ: “ປະໂກະ” ມີຫຼາຍຂໍ້ມູນທີ່ຄ້າຍຄືກັນ ແລະ ແມ່ນການໃຫ້ຄວາມໝາຍຕາມພາສາຂອງຊົນເຜົ່າ. ຊຶ່ງແມ່ນການນຳເອົາສອງຄຳມາລວມເຂົ້າກັນຄື: “ພະ” ແປວ່າ: ຟາກເບື້ອງນັ້ນ ແລະ ໂກະ: ແປວ່າ: “ພູ” ເມື່ອເອົາສອງຄຳມາລວມເຂົ້າກັນຈຶ່ງມີຄວາມໝາຍວ່າ: “ຟາກພູເບື້ອງນັ້ນ”. ຊົນເຜົ່າ ປະໂກະ ປະກອບດ້ວຍສອງແຊງຄື: ກາໂດ ແລະ ກາໄນ.

# ອາຊີບຂອງຊົນເຜົ່າ ປະໂກະ

ພື້ນຖານທາງດ້ານເສດຖະກິດ ແລະ ການທຳມາຫາກິນຂອງຊົນເຜົ່າ ປະໂກະ ສ່ວນຫຼາຍແມ່ນຖືເອົາການຜະລິດທາງດ້ານກະສິກຳເປັນຕົ້ນຕໍແມ່ນ ການເຮັດໄຮ່ແບບໝູນວຽນ, ເຮັດໄປແລ້ວປ່ອຍໃຫ້ປ່າເລົາຂຶ້ນ ແລະ ໃຫຍ່ໄດ້ 4-5 ປີ ຈິ່ງກັບຄືນມາເຮັດບ່ອນເກົ່ານັ້ນອີກ. ນອກຈາກນັ້ນ, ເຂົາເຈົ້າກໍຍັງມີການປູກພືດປະເພດຕ່າງໆ, ລ້ຽງສັດໃຫຍ່ ແລະ ສັດປີກເພື່ອໄວ້ສຳຮອງທັງນຳໃຊ້ເຂົ້າໃນການຈັດງານພິທີກຳຕ່າງໆ ທັງເປັນເຄື່ອງບໍລິໂພກປະຈຳວັນ ແລະ ມີການຄ້າຂາຍຍ່ອຍ. ປັດຈຸບັນມີການພັດທະນາໄປໃນທາງການຄ້າຂາຍເປັນສ່ວນໃຫຍ່.





ພາບໂດຍ: ກົມຊົນເຜົ່າ

# ທີ່ຕັ້ງບ້ານ ແລະ ເຮືອນ

ລັກສະນະບ້ານເຮືອນຂອງຊົນເຜົ່ານີ້ໂດຍທົ່ວໄປເຂົາເຈົ້າປຸກສ້າງບ້ານຢູ່ເຂດພູດອຍທີ່ຫ່າງໄກສອກຫຼີກໃນໄລຍະຄວາມສູງປະມານ 900 ແມັດ ຂຶ້ນໄປຫ່າງຈາກລະດັບນ້ຳທະເລ. ເຮືອນຂອງຊົນເຜົ່າປະໂກະເປັນເຮືອນຮ້ານ, ແຕ່ລັກສະນະຂອງເຮືອນຈະມີສອງລະບົບແຕກຕ່າງກັນຄື: ແບບເຮືອນຍາວຢູ່ຮ່ວມກັນຫຼາຍຄອບຄົວ ແລະ ຫຼາຍເຊັ່ນຄົນ. ເຮືອນໃນລັກສະນະນີ້ຈະພົບເຫັນໃນສັງຄົມ ຂອງຊຸມຊົນ ປະໂກະ ແລະ ກາໂດ. ອີກແບບໜຶ່ງແມ່ນເຮືອນຮ້ານສີ່ຫຼ່ຽມບໍ່ຍາວ ເໝາະສຳລັບສະມາຊິກຂອງຄອບຄົວດຽວ ຊຶ່ງເຮືອນໃນລັກສະນະນີ້ຈະພົບເຫັນໃນສັງຄົມຂອງຊຸມຊົນ ກາໄນ.



ພາບໂດຍ: ກົມຊົນເຜົ່າ


ພາບໂດຍ: ກິມຊຶນເຜົ່າ



ຖ່າຍພາບໂດຍ: ກົມຊົນເຜົ່າ

# ເຄື່ອງນຸ່ງຫົ່ມ

ເອກະລັກທາງດ້ານການນຸ່ງຖື, ເອ້ຢ້ອງ ຫຼື ເຄື່ອງນຸ່ງປະຈຳຊົນເຜົ່າຂອງເຂົາເຈົ້າທຸກວັນນີ້ບໍ່ຄ່ອຍຈະເຫັນແລ້ວ, ການນຸ່ງຖືມີລັກສະນະປ່ຽນແປງຕາມແຕ່ລະຍຸກສະໄໝ ໂດຍສະເພາະແມ່ນເຄື່ອງນຸ່ງຫົ່ມຈະນິຍົມຫາຊື້ຕາມຕະຫຼາດເປັນສ່ວນຫຼາຍ. ສຳລັບເຄື່ອງນຸ່ງຫົ່ມ ແລະ ແຕ່ງກາຍຂອງຊົນເຜົ່າ ປະໂກະ ໃນສະໄໝກ່ອນ.



ພາບໂດຍ: ກົມຊົນເຜົ່າ







ພາບໂດຍ: ກົມຊົນເຜົ່າ

# ອາຫານ ແລະ ເຄື່ອງດື່ມ

ສຳລັບອາຫານການກິນຂອງບັນດາຊົນເຜົ່າໃນສະໄໝກ່ອນ ແມ່ນມີລັກສະນະຄ້າຍຄືກັນສ່ວນຫຼາຍຈະມີການຫາກິນຕາມທຳມະຊາດເຊັ່ນ: ຫາປາຕາມລຳນ້ຳ, ລ່າເນື້ອສັດປ່າ, ເກັບເດັດຜັກປ່າມາປຸງແຕ່ງເປັນອາຫານປະເພດຕ່າງໆຄື: ແກງ, ຕົ້ມຜັກ, ລາບ, ແຈ່ວ, ປີ້ງ ແລະ ອື່ນໆທີ່ມີລົດຊາດຈືດ ແລະ ຈາງ. ສ່ວນການກິນດື່ມນັ້ນແມ່ນຈະດື່ມນ້ຳດິບທີ່ຕັກຈາກຫ້ວຍ, ຮ່ອງ, ໜອງ, ດື່ມເຫຼົ້າໄຫ, ສູບຢາ.



ພາບໂດຍ: ກົມຊົນເຜົ່າ

ປັດຈຸບັນນີ້ໄດ້ມີການພັດທະນາໃຫ້ຖືກຕາມຫຼັກການສຸຂະອະນາໄມ ແລະ ເພື່ອປ້ອງກັນພະຍາດຖອກທ້ອງ, ໄຂ້ຍຸງລາຍ ແລະ ອື່ນໆ ໄດ້ຫັນມາດື່ມນ້ຳຕົ້ມ ແລະ ດື່ມບໍລິສຸດ ທີ່ຜະລິດຈາກໂຮງງານຄື:ໂຮງງານເບຍລາວ ແລະ ສູບຢາສຳເລັດຮູບ.



# ຄວາມເຊື່ອຖື

ສຳລັບບຸນປະເພນີ ແລະ ພິທີກຳທາງຄວາມເຊື່ອຖືນັ້ນເຂົາເຈົ້າຈະມີບຸນປີໃໝ່ພາສາຂອງຊົນເຜົ່າປະໂກະເອີ້ນວ່າ: “ຈາງະ” ຊຶ່ງຈັດຂຶ້ນໃນເດືອນ 11-12 ຂອງທຸກໆປີ, ມີປະເພນີເຮັດບຸນກ່ຽວກັບດວງວິນຍານຂອງຄົນທີ່ຕາຍໄປແລ້ວ, ພາສາຂອງເຂົາເຈົ້າເອີ້ນວ່າ“ລະປືບ” ນອກຈາກງານດັ່ງກ່າວນີ້ແລ້ວໃນສັງຄົມຂອງຊົນເຜົ່າ ປະໂກະ ຍັງມີພິທີກຳທາງປະເພນີກ່ຽວກັບການຜະລິດ, ການປູກຝັງ ແລະ ອື່ນໆອີກຢ່າງຫຼວງຫຼາຍຂອງວົງຈອນຊີວິດໃນຮອບວຽນປີໜຶ່ງໆຈະມີການທຳພິທີຕ່າງໆ ນັ້ນມີຈຸດປະສົງເພື່ອໃຫ້ໄດ້ຜົນຜະລິດຈະເລີນ ງອກງາມ ແລະ ໄດ້ຮັບໝາກຜົນຢ່າງຫຼວງຫຼາຍ, ບໍ່ໃຫ້ມີການເຈັບໄຂ້ໄດ້ປ່ວຍເກີດຂຶ້ນໃນບ້ານ ແລະ ໃຫ້ທຸກຄົນພົ້ນຈາກໄພອັນຕະລາຍ ຕ່າງໆ.

# ສິລະປະວັນນະຄະດີ

ດ້ານສິລະປະວັນນະຄະດີ, ເຂົາເຈົ້າມີກອນຂັບລຳ, ຄຳສຸພາສິດ, ຄຳຜະຫຍາ ແລະ ອື່ນໆ, ທີ່ສະແດງເຖິງການບອກສອນລູກຫຼານທັງເປັນການພົວພັນກັບຊີວິດສັງຄົມຂອງຄົນ ແລະ ທຳມະຊາດ ຊຶ່ງຖືໄດ້ວ່າເປັນເອກະລັກຂອງຕົນເອງ.

# ພາສາປາກເວົ້າ

ຊົນເຜົ່າ ປະໂກະ ມີພາສາປາກເວົ້າທີ່ເປັນເອກະລັກສະເພາະຂອງຕົນ ຊຶ່ງຈັດເຂົ້າໃນໝວດພາສາ ມອນ-ຂະແມ, ເຂົາເຈົ້າບໍ່ມີຕົວໜັງສືຂຽນ.

*ຄັດຈາກປຶ້ມບັນດາຊົນເຜົ່າໃນ ສປປ ລາວ*

# ການສົມທຽບ
# ພາສາ ລາວ ກັບ ພາສາ ປະໂກະ

| ລຳດັບ | ພາສາ ລາວ | ພາສາ ປະໂກະ |
|---|---|---|
| 01 | ສະບາຍດີ | ບັນຊວນ |
| 02 | ໂຊກດີ | ອໍໄມ່ |
| 03 | ຂອບໃຈ | ກຳເອີນ |
| 04 | ຂໍໂທດ | ຂໍໂທດ |
| 05 | ເຈົ້າຊື່ຫຍັງ ? | ອຳເມີໂລໄມ? |
| 06 | ເຮັດຫຍັງຢູ່? | ອຳເມີໄມຕະ? |
| 07 | ກິນເຂົ້າແລ້ວບໍ? | ກົວໄມຈາໂດຍ? |
| 08 | ລາກ່ອນ | ລາກ່ອນ |
| 09 | ພົບກັນໃໝ່ | ກຣາເຮີມຸກໂລຍ |
| 10 | ບໍ່ເປັນຫຍັງ | ເລີຍອາເມີ |

*ຂໍ້ມູນໂດຍ: ແນວລາວສ້າງຊາດ ແຂວງ ສາລະວັນ*